# ກອງປະຊຸມຄັ້ງທີ 6 ຂອງຄູ່ຮ່ວມງານໂຄງການ ລະບົບອາຫານກະສິກຳແບບຍືນຍົງຂອງອາຊຽນ

ວັນທີ 19 ພະຈິກນີ້, ໂຄງການຮ່ວມມືພາກພື້ນຂອງເຢຍລະມັນລະບົບອາຫານກະສິກຳແບບຍືນຍົງຂອງອາຊຽນ ( ASEAN SAS ), ຮ່ວມກັບກົມປູກຝັງກະຊວງກະສິກຳ ແລະ ປ່າໄມ້ ແລະ ກອງເລຂາອາຊຽນຈັດກອງປະຊຸມຄັ້ງທີ່ 6 ຂອງຄູ່ຮ່ວມງານໂຄງການລະບົບອາຫານກະສິກຳແບບຍືນຍົງຂອງອາຊຽນຂຶ້ນທີ່ນະຄອນຫຼວງວຽງຈັນ, ໂດຍການເຂົ້າຮ່ວມຂອງທ່ານຫົວໜ້າໂຄງການດັ່ງກ່າວ, ຫົວໜ້າກົມແຜນການ ແລະ ການລົງທຶນກະຊວງກະສິກຳ ແລະ ປ່າໄມ້, ພ້ອມດ້ວຍຜູ້ຕາງໜ້າຈາກບັນດາປະເທດອາຊຽນເຂົ້າຮ່ວມນຳດ້ວຍ.

ຫົວໜ້າໂຄງການASEAN SAS ກ່າວວ່າ: ເພື່ອເປີດເວທີສົນທະນາສຳລັບຄູ່ຮ່ວມງານຈາກປະເທດອາຊຽນແລະພາກເອກະຊົນເຖິງສິ່ງທ້າທາຍຂອງຮູບແບບແຜນວຽກ ແລະ ຍຸດທະສາດການຈັດຕັ້ງປະຕິບັດໂຄງການໃນປີຕໍ່ໄປ, ເພື່ອສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດວິໄສທັດໃໝ່ ແລະ ແຜນຍຸດທະສາດສຳລັບການຮ່ວມມືທາງດ້ານອາຫານຂອງອາຊຽນ, ໂດຍສະເພາະວຽກງານກະສິກຳແລະປ່າໄມ້ນັບແຕ່ປີ 2016 - 2025, ກໍຄືການຄ້ຳປະກັນສະບຽງອາຫານຂອງອາຊຽນພາຍຫຼັງເຂົ້າເປັນປະຊາຄົມອາຊຽນໃນທ້າຍປີນີ້, ມັນໄດ້ຮຽກຮ້ອງໃຫ້ລະບົບອາຫານກະສິກຳແບບຍືນຍົງແຫ່ງຊາດ, ສ້າງຄວາມຍືນຍົງໃຫ້ແກ່ຊີວິດການເປັນຢູ່ ແລະ ການແຂ່ງຂັນໃນຂົງເຂດກະສິກຳ ແລະ ການສະໜອງອາຫານລັກທີ່ພຽງພໍໃນພາກພື້ນ, ຊຶ່ງໂຄງການ ASEAN SAS ຈະເຮັດໜ້າທີ່ສະໜັບສະໜູນການພັດທະນາດ້ານນະໂຍບາຍການປະສານງານ, ຍຸດທະສາດ ແລະ ການປຶກສາຫາລືແນວຄວາມຄິດລະດັບພາກພື້ນ, ໃນຂະແໜງອາຫານກະສິກຳແບບຍືນຍົງ ແລະ ສົ່ງເສີມປັດໃຈການຜະລິດແບບຍືນຍົງ ແລະ ການຈັດການພືດໂດຍຜ່ານການພັດທະນາຂີດຄວາມສາມາດ, ເພື່ອຕອບສະໜອງຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ.

ຫົວໜ້າໂຄງການ ASEAN SAS ກ່າວວ່າ: ໂຄງການຮ່ວມມືພາກພື້ນຂອງເຢຍລະມັນລະບົບອາຫານກະສິກຳແບບຍືນຍົງຂອງອາຊຽນໄດ້ເນັ້ນໜັກໃສ່ການສົ່ງເສີມການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ.ໂດຍຜ່ານການສົ່ງເສີມຂອງລະບົບອາຫານກະສິກຳແບບຍືນຍົງໃນລະດັບຊາດ ແລະ ພາກພື້ນ, ພາຍໃຕ້ແຜນງານຄ້ຳປະກັນສະບຽງອາຫານຂອງ AIFS ໂດຍຜ່ານການຮ່ວມມືຈາກປະຊາຄົມ, ພາກສ່ວນເອກະຊົນ ແລະ ສະຖາບັນຄົ້ນຄວ້າຕ່າງໆ ແລະ ກອງປະຊຸມຄັ້ງນີ້ຈະເປັນບາດກ້າວທີ່ສຳຄັນໜຶ່ງໂຄງການໃນການພັດທະນາຍຸດທະສາດສຳລັບກິດຈະກຳຂອງໂຄງການພາຍຫຼັງປີ 2015 ເພື່ອຮອງຮັບສິ່ງທ້າທາຍທີ່ເກີດຂື້ນໃໝ່, ເພື່ອຄວາມໝັ້ນຄົງຂອງອາຫານລວມເຖິງສະພາບແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ ແລະ ເພື່ອຮັກສາຄວາມປອດໄພໃນການຜະລິດອາຫານແບບຍືນຍົງໃນພາກພື້ນອາຊີ, ໂດຍກອງປະຊຸມຈະດຳເນີນໄປເປັນເວລາ 4 ວັນ.

